ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====-----

ສຳນັກງານ ຄຄຊ

ພະແນກຈັດຕັ້ງ ແລະ ບໍລິຫານ

ນະຄອນຫຼວງວຽງຈັນ, ວັນທີ 02 ຕຸລາ 2015

# ແຈ້ງການ

**ເຖິງ:** ບັນດາຄະນະພະແນກ ພາຍໃນ ສຳນັກງານ ຄຄຊ ທີ່ນັບຖື.

**ເລື່ອງ:** ທາບທາມພະນັກງານທີ່ມີຄວາມສົນໃຈສະໝັກເຂົ້າຮ່ວມຝຶກອົບຮົມ ຢູ່ ສະຖາບັນ ລາວ-ຍີ່ປຸ່ນ ລະຫວ່າງເດືອນ ຕຸລາ 2015 ເຖິງ ເດືອນ ມີນາ 2016.

- ອີງຕາມແຈ້ງການຂອງກົມຈັດຕັ້ງແລະພະນັກງານ ເລກທີ 205/ກຈພ ລົງວັນທີ 02 ຕຸລາ 2015.
- ອີງຕາມທິດຊີ້ນຳຂອງທ່ານຮັກສາການຫົວໜ້າສຳນັກງານ ຄຄຊ ຄັ້ງວັນທີ 02 ຕຸລາ 2015.

ພະແນກຈັດຕັ້ງ ແລະ ບໍລິຫານ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອທາບທາມພະນັກງານທີ່ມີຄວາມສົນໃຈເຂົ້າຮ່ວມຝຶກອົບຮົມທີ່ສູນລາວ-ຍີ່ປຸ່ນ (ມຊ) ໃນເວລານອກໂມງລັດຖະການ ເວລາ 17:30-20:30 ໂມງ ໂດຍທີ່ຜູ້ສະໝັກແມ່ນຕ້ອງຮັບຜິດຊອບຄ່າໃຊ້ຈ່າຍດ້ວຍຕົນເອງ ເຊິ່ງມີຫົວຂໍ້ດັ່ງລຸ່ມນີ້:

1. ພັດທະນາຄວາມຄິດຂອງຕົນສູ່ຄວາມສຳເລັດ 19-30 ຕຸລາ 2015;
2. ຍຸດທະສາດການບໍລິຫານ 16-27 ພະຈິກ 2015;
3. ການບັນຊີການເງິນຂັ້ນຕົ້ນ ຫຼື ພື້ນຖານການບັນຊີ 30 ພະຈິກ - 11 ທັນວາ 2015;
4. ການບໍລິຫານບຸກຄະລາກອນ 14-25 ທັນວາ 2016;
5. ການສ້າງແຜນທະລະກິດ 18-29 ມັງກອນ 2016;
6. ການຕະຫຼາດສຳລັບການບໍລິການ 01-12 ກຸມພາ 2016;
7. ການຄຸ້ມຄອງໂຄງການ 15-26 ກຸມພາ 2016;
8. ການນຳໃຊ້ຊອບແວເຂົ້າໃນການວິໄຈ 14-25 ມີນາ 2016.

(ສຳລັບຂໍ້ມູນລະອຽດແຕ່ລະຫົວຂໍ້ ແລະ ຄ່າລົງທະບຽນ ສາມາດເບິ່ງໄດ້ຢູ່ກະດານຂ່າວຂອງ ສຳນັກງານ ຄຄຊ ໃນໝວດແຈ້ງການ)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

ຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ

ລ່ຳພອນ ສຸພັນໄຊ

ໝາຍເຫດ: ອາຈານສອນແມ່ນຄົນຍີ່ປຸ່ນ ແລະ ຄົນລາວ (ຜູ້ທີ່ສົນໃຈລາຍລະອຽດເພີ່ມເຕີມ ກະລຸນາຕິດຕໍ່ທ່ານ ອານຸສອນ ບຸນຍາວົງ, ວິຊາການ ພະແນກຈັດຕັ້ງ ແລະ ບໍລິຫານ).

ສຄຄຊ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ສຳນັກງານ ຄຄຊ
ຮັບ ເລກທີ......1020
ວັນທີ..02..OCT..2015
ໂທລະສັບ 021 217770

ເລກທີ 205 /ກຈພ

ນະຄອນຫລວງວຽງຈັນ, ວັນທີ 02 OCT 2015

## ແຈ້ງການ

**ເຖິງ:** ບັນດາທ່ານຫົວໜ້າກົມ ແລະ ທຽບເທົ່າພາຍໃນ ທຫລ ທີ່ນັບຖື.

**ເລື່ອງ:** ການເຂົ້າຮ່ວມການຝຶກອົບຮົມ ຢູ່ສະຖາບັນລາວ-ຍີ່ປຸ່ນ.

- ອີງຕາມສະໂນດນຳສົ່ງຂອງສະຖາບັນລາວ-ຍີ່ປຸ່ນ ສະບັບເລກທີ 407/ສລຍ ລົງວັນທີ 14/9/2015.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະຖາບັນລາວ-ຍີ່ປຸ່ນ ຈະຈັດການຝຶກອົບຮົມໃນ 8 ຫຼັກສູດ ໃນເວລານອກໂມງລັດຖະການ, ຢູ່ສະຖາບັນລາວ-ຍີ່ປຸ່ນ (ລາຍລະອຽດໄດ້ມີເອກະສານການຝຶກອົບຮົມຄັດຕິດມາພ້ອມ). ສະນັ້ນ; ກົມຈັດຕັ້ງແລະພະນັກງານ ຈຶ່ງແຈ້ງມາຍັງທ່ານ ເພື່ອແຈ້ງໃຫ້ພະນັກງານຜູ້ທີ່ມີຄວາມສົນໃຈສາມາດໄປສະໝັກເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ ສຳລັບຄ່າໃຊ້ຈ່າຍແມ່ນຜູ້ຈະໄປເຂົ້າຮ່ວມເປັນຜູ້ຮັບຜິດຊອບເອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ສຳເນົາລາຍຊື່ຜູ້ທີ່ສະໝັກ ແລ້ວນຳສົ່ງມາຍັງກົມຈັດຕັ້ງແລະພະນັກງານດ້ວຍ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ທະນາຄານແຫ່ງ ສ. ປ. ປ. ລາວ ★ ກົມຈັດຕັ້ງແລະພະນັກງານ

ບຸນຕາ **ດາຣາວົງ**

✪ ເອກະສານຄັດຕິດ:

- ລາຍລະອຽດຂອງການຝຶກອົບຮົມ 1 ສະບັບ

# ຫຼັກສູດຝຶກອົບຮົມໄລຍະສັ້ນຂອງສະຖາບັນພັດທະນາຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ

## (ໄລຍະແຕ່ເດືອນຕຸລາ 2015 ຫາ ເດືອນ ມີນາ 2016)

## ຫົວຂໍ້ 1: "ພັດທະນາຄວາມຄິດຂອງຕົນສູ່ຄວາມສໍາເລັດ" (10ມື້ =30 ຊົ່ວໂມງ)

## ວັນທີ 19 -30 ຕຸລາ 2015, ເວລາ 17:30 – 20:30

### ກ. ຄວາມເປັນມາຂອງຫຼັກສູດພັດທະນາຄວາມຄິດຂອງຕົນສູ່ຄວາມສໍາເລັດ

ໃນການສ້າງສາພັດທະນາປະເທດຊາດມັນຮຽກຮ້ອງໃຫ້ຄົນໃນຊາດມີການພັດທະນາຍົກລະດັບຄວາມຮູ້ຄວາມສາມາດຂອງຕົນ ເພາະແຕ່ລະຄົນແມ່ນຈຸລັງໜຶ່ງຂອງສັງຄົມ. ຖ້າແຕ່ລະຄົນມີການພັດທະນາເລີ່ມຕົ້ນຈາກຕົນເອງຢ່າງບໍ່ຢຸດຢັ້ງມັນຈະເຮັດໃຫ້ສັງຄົມມີການຂະຫຍາຍຕົວຢ່າງແຂງແຮງ ສະນັ້ນການທີ່ຈະເຮັດໃຫ້ປະເທດລາວຫຼຸດພົ້ນອອກຈາກຄວາມທຸກຍາກກໍ່ແມ່ນໜ້າທີ່ຂອງໝົດທຸກຄົນທີ່ຕ້ອງໄດ້ພ້ອມກັນເອົາໃຈໃສ່ພັດທະນາເພື່ອບັນລຸ 4 ບຸກທະລຸທີ່ກອງປະຊຸມໃຫຍ່ຂອງພັກຄັ້ງທີ VIII ວາງໄວ້ ແຕ່ຈະມີຄົນຈັກເປີເຊັນທີ່ເຫັນຄວາມສໍາຄັນຂອງການພັດທະນາຕົນເອງໂດຍຮູ້ນໍາໃຊ້ທິດສະດີຫຼັກການຕ່າງໆທີ່ເປັນແນວທາງໃນການດໍາລົງຊີວິດ ແລະ ປະຕິບັດວຽກງານເພື່ອບັນລຸເປົ້າໝາຍທີ່ວາງໄວ້. ສໍາລັບຫຼັກສູດນີ້ແມ່ນຂ້າພະເຈົ້າຕັ້ງໃຈສ້າງຂຶ້ນມາເພື່ອເປັນແຮງບັນດານໃຈ ແລະ ເປັນແນວທາງໃຫ້ແກ່ຜູ້ທີ່ຕ້ອງການຢາກບັນລຸເປົ້າໝາຍໃນຊີວິດໃນແຕ່ລະດ້ານໂດຍການຮົບໂຮມເອົາທິດສະດີຕ່າງໆກ່ຽວກັບການພັດທະນາຄວາມຄິດ ແລະ ກົດເກນແຫ່ງໂລກຈັກກະວານຈໍານວນໜຶ່ງທີ່ ຜູ້ປະສົບຜົນສໍາເລັດໃນໂລກໄດ້ນໍາໃຊ້ເຂົ້າໃນການພັດທະນາຕົນເອງຈົນສໍາເລັດມາແລ້ວ. ຈາກການທີ່ຂ້າພະເຈົ້າໄດ້ນໍາໃຊ້ທິດສະດີ ແລະ ກົດແຫ່ງໂລກຈັກກະວານເຫຼົ່ານີ້ເຂົ້າໃນການພັດທະນາຄວາມຄິດຂອງຕົນເພື່ອແກ້ໄຂບັນຫາຕ່າງໆ ແລະ ພັດທະນາຕົນເອງ, ຄອບຄົວ ແລະ ວຽກງານກໍ່ເຫັນວ່າມີຫຼາຍຢ່າງດີຂຶ້ນທຽບໃສ່ແຕ່ກ່ອນດັ່ງຄໍາເວົ້າຂອງທ່ານ Brian Tracy ທີ່ວ່າ: **ປ່ຽນແປງຄວາມຄິດຂອງທ່ານເພື່ອປ່ຽນແປງຊີວິດຂອງທ່ານ (Change your thought to change your life)** ມັນໄດ້ເຮັດໃຫ້ຂ້າພະເຈົ້າເຂົ້າໃຈວ່າການພັດທະນາຄວາມຄິດຂອງຕົນແມ່ນສິ່ງສໍາຄັນທີ່ສຸດທີ່ເຮົາເຮັດໄດ້ໂດຍບໍ່ຕ້ອງຂຶ້ນກັບໃຜ ແລະ ເພື່ອບໍ່ໃຫ້ເຮົາຕົກເປັນທາດຂອງໂຊກຊະຕາກໍາ ຫຼື ສິ່ງແວດລ້ອມທີ່ບໍ່ເພິ່ງປາດຖະໜາ ເພາະການທີ່ຈະປ່ຽນຄວາມຄິດຂອງຄົນອື່ນແມ່ນປ່ຽນໄດ້ຍາກ ແຕ່ການປ່ຽນຄວາມຄິດຂອງຕົນເອງແມ່ນເຮັດໄດ້ງ່າຍກວ່າ. ມີຫຼາຍຢ່າງກໍ່ເໜືອການຄວບຄຸມຂອງເຮົາ ແຕ່ກໍ່ມີຫຼາຍຢ່າງທີ່ເຮົາສາມາດເຮັດໄດ້ຢ່າງບໍ່ມີຂີດຈໍາກັດຂໍພຽງເຮົາເຂົ້າໃຈພະລັງວິເສດທີ່ຊ້ອນຢູ່ພາຍໃນໂຕເຮົາເອງ ແລະ ກົດແຫ່ງໂລກຈັກກະວານທີ່ເຮົາສາມາດນໍາໃຊ້ເຕັມທີ່ແລ້ວມັນຈະເປັນກຸນແຈວິເສດທີ່ນໍາບັນດາທ່ານໄປສູ່ຄວາມສໍາເລັດໄດ້. ສະນັ້ນຂ້າພະເຈົ້າຈຶ່ງຢາກຈະແບ່ງປັນຄວາມຮູ້, ປະສົບການທີ່ໄດ້ຮຽນຮູ້ ແລະ ນໍາໃຊ້ມາ ເພື່ອເປັນທິດທາງໃຫ້ແກ່ນັກສຶກສາ, ນັກຮຽນຮູ້ ປັນຍາຊົນ ແລະ ພະນັກງານ ທີ່ຢາກພັດທະນາຊີວິດຂອງຕົນເອງໃຫ້ມີຄວາມສໍາເລັດໃນແຕ່ລະດ້ານຕາມທີ່ຕົນເອງຄາດຫວັງໄວ້.

### ຂ. ຈຸດປະສົງຂອງຫຼັກສູດ:

ເພື່ອຊ່ວຍໃຫ້ນັກສໍາມະນາກອນໄດ້ຮຽນຮູ້ວິທີຄິດຢ່າງຖືກຕ້ອງ ແລະ ການຝຶກທັກສະຕ່າງໆໃນການ ພັດທະນາຄວາມຄິດຂອງຕົນເອງທີ່ຈະນໍາໄປສູ່ຄວາມສໍາເລັດໃນຊີວິດ ບໍ່ວ່າທາງດ້ານວຽກງານ, ທຸລະກິດ, ກໍ່ຄືຄອບຄົວ ແລະ ອື່ນໆ. ຫົວຂໍ້ຕ່າງໆທັງໝົດເຫຼົ່ານີ້ຈະຊ່ວຍໃຫ້ນັກສໍາມະນາກອນໄດ້ຄົ້ນພົບເຄັດລັບ ແລະ ເຂົ້າໃຈຕົວຕົນທີ່ແທ້ຈິງຂອງຕົນເພື່ອຈະໄດ້ນໍາໃຊ້ພະລັງທີ່ບົ່ມຊ້ອນຢູ່ພາຍໃນອອກມາເຕັມທີ່ໃນການ ພັດທະນາຕົນເອງ ແລະ ວຽກງານແຕ່ລະດ້ານໃຫ້ກ້າວໄປສູ່ຄວາມສໍາເລັດຢ່າງບໍ່ຢຸດຢັ້ງ.

### ຄ. ເນື້ອໃນຫຼັກສູດໂດຍຫຍໍ້:

ສໍາລັບຫົວຂໍ້ທີ່ກ່ຽວພັນໃນການພັດທະນາຄວາມຄິດໃນຫຼັກສູດນີ້ແມ່ນຂ້າພະເຈົ້າຈະອະທິບາຍເຖິງຄວາມສໍາຄັນຂອງການວາງເປົ້າໝາຍຊີວິດ, ປັດໃຈທີ່ນໍາສູ່ຄວາມສໍາເລັດ, ວິທີພັດທະນາຈຸດແຂງ ຫຼື ຈຸດດີຂອງຕົນ ແລະ ແກ້ໄຂຈຸດອ່ອນ ຫຼື ຈຸດຄ້າງຄາທີ່ເປັນອຸປະສັກຕໍ່ຄວາມກ້າວໜ້າໂດຍຮຽນຮູ້ ພະລັງຂອງຄວາມຄິດບວກ, ພະລັງສະໝອງ, ຄວາມເຊື່ອ, ຈິນຕະນາການ, ຈິດສໍານຶກ-ຈິດໃຕ້ສໍານຶກ, ກົດແຫ່ງການດຶງດູດ, ກົດຂອງການໃຫ້ ແລະ ການຮັບ, ກົດຂອງເຫດ ແລະ ຜົນ

, ການໃຫ້ອະໄພ, ຄວາມສຳນຶກຮູ້ຄຸນ ແລະ ອື່ນໆອີກ ເພື່ອໃຫ້ທ່ານຮູ້ວ່າສິ່ງໃດບໍ່ຄວນເຮັດເພື່ອຫຼີກລ້ຽງບັນຫາ ແລະ ສິ່ງໃດຄວນເຮັດເພື່ອສົ່ງເສີມໃຫ້ທ່ານບັນລຸເປົ້າໝາຍທີ່ວາງໄວ້ໄດ້ງ່າຍຂຶ້ນກວ່າເກົ່າ.

**ງ. ຮູບແບບການຝຶກອົບຮົມ:**

- ບັນຍາຍທິດສະດີ, ຫຼັກການ, ຍົກຕົວຢ່າງ ແລະ ສົນທະນາ.
- ວິເຄາະຈຸດແຂງ ແລະ ຈຸດອ່ອນຂອງນັກສຳມະນາກອນພ້ອມທັງໃຫ້ທິດທາງໃນການຄົ້ນຄິດ, ແກ້ໄຂ ແລະ ພັດທະນາ.

**ຈ. ປະສົບການຂອງອາຈານສອນ:**

ທ່ານ ອາຈານ ລີປ່າເອ້ຍ ບົວປາວ ເປັນອາຈານສອນທີ່ມີປະສົບການດ້ານການສອນພາສາອັງກິດ ແລະ ສຳເລັດການສຶກສາຂັ້ນປະລິນຍາໂທດ້ານການພັດທະນາແລະບໍລິຫານ ການສຶກສາຢູ່ທີ່ມະຫາວິທະຍາໄລຮິໂລຊິມາ, ປະເທດຍີ່ປຸ່ນ.

## <u>ຫົວຂໍ້ 2:</u> "ຍຸດທະສາດການບໍລິຫານ" (10ມື້ = 30 ຊົ່ວໂມງ )

## ວັນທີ 16 - 27 ພະຈິກ 2015, ເວລາ 17:30 – 20:30

**ກ. ຈຸດປະສົງຂອງຫຼັກສູດ:**

ສຳລັບຜູ້ທີ່ມີທຸລະກິດຢູ່ແລ້ວສາມາດປັບປຸງພັດທະນາແບບແຜນທຸລະກິດຂອງຕົນໃຫ້ຈະເລີນຍິ່ງຂຶ້ນດ້ວຍແບບວິທີ ຍຸດທະສາດທີ່ຄອບຄຸມຮອບດ້ານ ເຂົ້າໃຈງ່າຍ ແລະ ມີປະສິດທິຜົນສູງສຸດ.

**ຂ. ເນື້ອໃນຫຼັກສູດໂດຍຫຍໍ້:**

- ຄວາມໝາຍຄວາມສຳຄັນຂອງຍຸດທະສາດການບໍລິຫານ
- ວິທີທາງດ້ານຍຸດທະສາດ
- ການວິເຄາະສະພາບແວດລ້ອມພາຍໃນ-ພາຍນອກ, 4Cs, ການກຳນົດທີ່ຕັ້ງທຸລະກິດ
- ການວິເຄາະ SWOT ແລະ ກຳນົດຍຸດທະສາດ
- ການຈັດຕັ້ງປະຕິບັດຍຸດທະສາດ ແລະ ອື່ນໆ

**ຄ. ຮູບແບບການຝຶກອົບຮົມ:**

ຫຼັກສູດນີ້ຈະດຳເນີນໂດຍມີການບັນຍາຍ,ຖົກຖຽງເປັນກຸ່ມ, ສົນທະນາ (Q & A). ວາງແຜນການປະຕິບັດຕົວຈິງ: ຜູ້ເຂົ້າຮ່ວມຈະໄດ້ຮ່າງແຜນທຸລະກິດຂອງຕົນເພື່ອນຳສະເໜີຕໍ່ອາຈານ.

**ງ. ປະສົບການຂອງອາຈານສອນ:**

ທ່ານ ຮສ. ດຣ ບຸນລ້ອມ ດ້ວງເງິນ ສຳເລັດການສຶກສາລະດັບປະລິນຍາຕີຈາກປະເທດອິດສະຕາລີ, ລະດັບປະລິນຍາໂທ ແລະ ປະລິນຍາເອກຈາກປະເທດຍີ່ປຸ່ນ. ນອກນັ້ນທ່ານຍັງເປັນອາຈານສອນ ແລະ ຜູ້ບໍລິຫານທີ່ມີປະສົບການສູງດ້ານເສດຖະສາດ ແລະ ການບໍລິຫານໃນທາງພາກທິດສະດີ ແລະ ຕົວຈິງ.

## <u>ຫົວຂໍ້ 3:</u> "ການບັນຊີການເງິນຂັ້ນຕົ້ນ ຫຼື ພື້ນຖານການບັນຊີ" (10ມື້ = 30 ຊົ່ວໂມງ)

## ວັນທີ 30 ພະຈິກ - 11 ທັນວາ 2015, ເວລາ 17:30 – 20:30

**ກ. ຈຸດປະສົງຂອງຫຼັກສູດ:**

- ກໍ່ສ້າງບຸກຄະລາກອນໃນຂະແໜງການທະນາຄານໂດຍສະເພາະແມ່ນຜູ້ທີ່ຈົບຂະແໜງການອື່ນຊຶ່ງ ບໍ່ກ່ຽວຂ້ອງກັບຫຼັກສູດການບັນຊີມາກ່ອນ
- ເສີມສ້າງພາບລວມຄວາມຮູ້ພື້ນຖານກ່ຽວກັບບັນຊີການເງິນຂັ້ນຕົ້ນ ໃຫ້ນັກສຳມະນາກອນສາມາດນຳໄປພັດຂະຫຍາຍເຂົ້າໃນວຽກງານຕົວຈິງທີ່ກ່ຽວຂ້ອງ

**ຂ. ເນື້ອໃນຫຼັກສູດໂດຍຫຍໍ້:**

- ປະຫວັດຄວາມເປັນມາ, ຄວາມໝາຍ ແລະ ຄວາມສຳຄັນຂອງການບັນຊີໃນຂະແໜງການຕ່າງໆ;
- ຫຼັກການບັນຊີ, ລະບຽບຂໍ້ກຳນົດຕ່າງໆໃນການບັນທຶກບັນຊີ;
- ຂະບວນການບັນທຶກບັນຊີນັບແຕ່ຂັ້ນເລີ່ມຕົ້ນຈົນເຖິງການສະຫຼຸບບັນຊີໂດຍພື້ນຖານເຊິ່ງປະກອບດ້ວຍການສ້າງເອກະສານລາຍງານການເງິນຕ່າງໆ;
- ວຽກງານການປັບປຸງບັນຊີທ້າຍປີ.

**ຄ. ຮູບແບບການຝຶກອົບຮົມ:**

ຫຼັກສູດນີ້ຈະດຳເນີນໂດຍມີການບັນຍາຍ, ກິດຈະກຳ, ແລກປ່ຽນຄວາມຄິດເຫັນ, ກໍລະນີສຶກສາ ແລະ ລາຍງານທາງເອກະສານເປັນບຸກຄົນ ແລະ ເສັງປະເມີນຜູ້ເຂົ້າຝຶກອົບຮົມ

**ງ. ປະສົບການຂອງອາຈານສອນ:**

ອຈ. ນ ພອນສະຫັວນ ມີຫາພົນ ເປັນອາຈານສອນທີ່ມີປະສົບການໃນການສອນບັນຊີທະນາຄານ, ບັນຊີພື້ນຖານ ແລະ ໂປຣແກຣມບັນຊີທະນາຄານເປັນເວລາຫລາຍປີ.

## <u>ຫົວຂໍ້ 4:</u> "ການບໍລິຫານບຸກຄະລາກອນ" (10ມື້ =30 ຊົ່ວໂມງ)

## ວັນທີ 14 - 25 ທັນວາ 2016, ເວລາ 17:30 – 20:30

**ກ. ຈຸດປະສົງຂອງຫຼັກສູດ:**

ຈຸດປະສົງຂອງວິຊາ ການບໍລິຫານບຸກຄະລາກອນ ແມ່ນເພື່ອໃຫ້ຜູ້ເຂົ້າຝຶກອົບຮົມຮູ້ເຖິງຄວາມສຳຄັນຂອງບຸກຄະລາກອນ ແລະການຮັກສາບຸກຄະລາກອນທີ່ເກັ່ງໄວ້ໃນອົງກອນ ໂດຍສະເພາະໃນສະພາບທີ່ມີການແຂ່ງຂັນສູງທາງດ້ານເສດຖະກິດເຊັ່ນປະຈຸບັນ ບຸກຄະລາກອນເກັ່ງຍິ່ງແມ່ນຊັບສິນອັນລ້ຳຄ່າແມ່ນກຳລັງແຮງເປັນກຳລັງທີ່ພັກດັນອົງກອນໄປສູ່ຄວາມສຳເລັດ.

**ຂ. ເນື້ອໃນຫຼັກສູດໂດຍຫຍໍ້:**

ເນື້ອໃນທີ່ຈະນຳມາແລກປ່ຽນກັບສຳມະນາກອນໃນຫຼັກສູດນີ້ປະກອບມີດັ່ງລຸ່ມນີ້:

- ບົດບາດ ແລະ ຄວາມສຳຄັນຂອງບຸກຄະລາກອນ
- ເຕັກນິກ ແລະ ລະບົບການບໍລິຫານບຸກຄະລາກອນ
- ຄວາມສາມາດຍົກລະດັບທັກສະຂອງຄົນໃນການສະແຫວງຫາການພັດທະນາ
- ການຮັກສາບຸກຄະລາກອນທີ່ເກັ່ງໄວ້ໃນອົງກອນ

**ຄ. ຮູບແບບການຝຶກອົບຮົມ:**

ຫຼັກສູດນີ້ຈະດຳເນີນໂດຍມີການບັນຍາຍ, ຄົ້ນຄ້ວາເປັນກຸ່ມ, ສົນທະນາ (Q & A).

ງ. ປະສົບການຂອງອາຈານສອນ

ດຣ ນິລັນດອນ ທະພະໄຊ ເປັນອາຈານຮັບເຊີນຈາກ ມະຫາວິທະຍາໄລກະເສດສາດ. ທ່ານເປັນອາຈານສອນ ທີ່ມີປະສົບການສູງດ້ານການບໍລິຫານບຸກຄະລາກອນ ແລະ ທັງເປັນທີ່ປຶກສາແກ່ອົງກອນທີ່ມີຊື່ສຽງໃນປະເທດໄທ.

## ຫົວຂໍ້ 5: "ການສ້າງແຜນທຸລະກິດ" (10ມື້ =30 ຊົ່ວໂມງ)

## ວັນທີ 18 - 29 ມັງກອນ 2016, ເວລາ 17:30 – 20:30

ກ. ຈຸດປະສົງຂອງຫຼັກສູດ:

ຈຸດປະສົງຂອງວິຊາການສ້າງແຜນທຸລະກິດແມ່ນເພື່ອໃຫ້ຜູ້ເຂົ້າຝຶກອົບຮົມຮູ້ເຖິງໂຄງປະກອບຂອງແຜນທຸລະກິດ, ການພັດທະນາ ແລະ ປະເມີນແຜນທຸລະກິດຂອງບໍລິສັດທີ່ຈະສ້າງຂຶ້ນໃໝ່ ຫຼື ສໍາລັບບໍລິສັດທີ່ມີຢູ່ແລ້ວ.

ຂ. ເນື້ອໃນຫຼັກສູດໂດຍຫຍໍ້:

ເນື້ອໃນທີ່ຈະນໍາມາແລກປ່ຽນກັບສໍາມະນາກອນໃນຫຼັກສູດນີ້ປະກອບມີດັ່ງລຸ່ມນີ້:

- ຄວາມຮູ້ທົ່ວໄປກ່ຽວກັບແຜນທຸລະກິດ
- ໂຄງປະກອບຂອງແຜນທຸລະກິດ
- ການກໍານົດປັດຊະຍາທຸລະກິດ
- ວິທີແບບຍຸດທະສາດໃນການສ້າງແຜນທຸລະກິດ
- ການກໍານົດທີ່ຕັ້ງ (X-Y), 4C, ຄຸນຄ່າ
- ການວິເຄາະ SWOT ແລະກໍານົດຍຸດທະສາດ
- ກໍານົດປັດໃຈສູ່ຜົນສໍາເລັດ ແລະ ກະແສທຸລະກິດ
- ໂຄງຮ່າງການຈັດຕັ້ງ ແລະ ຂໍ້ສົມມຸດຖານຕ່າງໆເພື່ອການວິເຄາະດ້ານການເງິນ

ຄ. ຮູບແບບການຝຶກອົບຮົມ:

ຫຼັກສູດນີ້ຈະດໍາເນີນໂດຍມີການບັນຍາຍ,ຄົ້ນຄ້ວາເປັນກຸ່ມ, ສົນທະນາ (Q & A). ວາງແຜນການປະຕິບັດຕົວຈິງ: ຜູ້ເຂົ້າຮ່ວມຈະໄດ້ຮ່າງແຜນທຸລະກິດຂອງຕົນເພື່ອນໍາສະເໜີຕໍ່ອາຈານ.

ງ. ປະສົບການຂອງອາຈານສອນ

ອາຈານ **Tetsuo Fukuyama** ເປັນຊ່ຽວຊານທີ່ປຶກສາ ແລະ ເຄີຍເປັນຜູ້ບໍລິຫານຂອງບໍລິສັດ Kanebo Cosmetics ຂອງປະເທດຍີ່ປຸ່ນ ແລະ ທັງເປັນອໍານວຍການບໍລິສັດ Truspire.Co.Ltd, ປະເທດ ຍີ່ປຸ່ນ.

## ຫົວຂໍ້ 6: "ການຕະຫລາດສໍາລັບການບໍລິການ'' (10ມື້ =30 ຊົ່ວໂມງ)

## ວັນທີ 01 - 12 ກຸມພາ 2016, ເວລາ 17:30 – 20:30

ກ. ຈຸດປະສົງຂອງຫຼັກສູດ:

ເພື່ອຊ່ວຍໃຫ້ນັກສໍາມະນາກອນໄດ້ຮຽນຮູ້ວ່າການຕະຫຼາດທີ່ແທ້ຈິງແມ່ນຫຍັງ, ການເລືອກຜະລິດຕະພັນ, ຄວາມສໍາຄັນຂອງການເລືອກກຸ່ມລູກຄ້າ, ການນໍາໃຊ້ຍຸດທະສາດດ້ານການບໍລິການເພື່ອເພີ່ມຍອດຂາຍ ແລະ ກໍາໄລ ແລະ ຮຽນຮູ້ການວິເຄາະຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ອຸປະສັກຂອງທຸລະກິດຕົນເພື່ອປັບປຸງແກ້ໄຂໃຫ້ເປັນທີ່ເພິ່ງພໍໃຈຂອງລູກຄ້າ.

ຂ. ເນື້ອໃນຫຼັກສູດໂດຍຫຍໍ້:

ການບໍລິຫານການຕະຫລາດສິ່ງສໍາຄັນທີ່ສຸດແມ່ນການບໍລິການເພື່ອເຮັດໃຫ້ລູກຄ້າເກີດຄວາມເພິ່ງພໍໃຈສູງສຸດ, ການວາງແຜນການປັບປຸງການບໍລິການ, ການວິເຄາະຕະຫລາດ, ການວິເຄາະຄູ່ແຂ່ງ, ການກໍານົດປະເດັນທີ່ເປັນຍຸດທະສາດດ້ານ

ການບໍລິການຕະຫລາດຂອງທຸລະກິດ, ການຄັດເລືອກກຸ່ມເປົ້າໝາຍລູກຄ້າ ແລະ ການສ້າງຄວາມແຕກຕ່າງທາງດ້ານຄຸນຄ່າສໍາລັບລູກຄ້າ.

**ຄ. ຮູບແບບການຝຶກອົບຮົມ:**

- ບັນຍາຍທິດສະດີ, ຫຼັກການ, ຍົກຕົວຢ່າງ, ສົນທະນາ ແລະ ເຮັດບົດຝຶກຫັດເປັນກຸ່ມ.
- ວິເຄາະ SWOT ຂອງທຸລະກິດແຕ່ລະຄົນ ແລະ ສ້າງແຜນການຕະຫຼາດ.

**ງ. ປະສົບການຂອງອາຈານສອນ**

ທ່ານ ອາຈານ **Toshio** Yamamoto ເປັນຊ່ຽວຊານທີ່ປຶກສາ ແລະເປັນຄູຝຶກດ້ານທຸລະກິດ, ການຕະຫຼາດ ແລະການຂາຍຂອງບໍລິສັດ Panasonic ປະເທດຍີ່ປຸ່ນເປັນເວລາ 38 ປີໂດຍດໍາລົງ ຫຼາຍໆຕໍາແໜ່ງ ດັ່ງນີ້: ຜູ້ຈັດການດ້ານການຕະຫຼາດ ແລະການຂາຍ, ເປັນຜູ້ອໍານວຍການປະຈໍາຢູ່ບໍລິສັດຕ່າງໆໃນຕ່າງປະເທດ ແລະ ຍັງເປັນອາຈານສອນດ້ານການຕະຫຼາດ.

## ຫົວຂໍ້ 7: "ການຄຸ້ມຄອງໂຄງການ" (10 ມື້ = 30 ຊົ່ວໂມງ)
## ວັນທີ 15 - 26 ກຸມພາ 2016, ເວລາ 17:30 – 20:30

**ກ. ຈຸດປະສົງຂອງຫຼັກສູດ**

ເພື່ອຊ່ວຍໃຫ້ນັກສໍາມະນາກອນຮຽນຮູ້ 5 ຂັ້ນຕອນ ແລະ 9 ອົງປະກອບສໍາຄັນໃນການຄຸ້ມຄອງໂຄງການຕາມມາດຕະຖານສາກົນທີ່ແທດເໝາະກັບທັງໂຄງການຂອງພາກລັດແລະພາກເອກະຊົນໂດຍອີງຕາມຄູ່ມື PMBOK "Guide to the Project Management Body of Knowledge".

**ຂ. ເນື້ອໃນຫຼັກສູດໂດຍຫຍໍ້**

- ຄວາມຮູ້ພື້ນຖານກ່ຽວກັບການຄຸ້ມຄອງໂຄງການ
- 5 ຂັ້ນຕອນຂອງການຄຸ້ມຄອງໂຄງການ
- ອົງປະກອບການຄຸ້ມຄອງການລວມສູນ, ຂອບເຂດ, ເວລາຂອງໂຄງການ
- ອົງປະກອບການຄຸ້ມຄອງຕົ້ນທຶນ, ຄຸນນະພາບ, ຊັບພະຍາກອນມະນຸດຂອງໂຄງການ
- ອົງປະກອບການຄຸ້ມຄອງການສື່ສານ, ຄວາມສ່ຽງ, ການຈັດຊື້ຂອງໂຄງການ
- ຕົວຢ່າງຂອງການຄຸ້ມຄອງໂຄງການທີ່ດີ ແລະ ບໍ່ດີ
- ຝຶກຫັດການວິເຄາະການຄຸ້ມຄອງໂຄງການ 1
- ຝຶກຫັດການວິເຄາະການຄຸ້ມຄອງໂຄງການ 2
- ຝຶກຫັດການວິເຄາະການຄຸ້ມຄອງໂຄງການ 3
- ທົບທວນຄືນ 5 ຂັ້ນຕອນ ແລະ 9 ອົງປະກອບສໍາຄັນຂອງການຄຸ້ມຄອງໂຄງການ

**ຄ. ຮູບແບບການຝຶກອົບຮົມ**

ຫຼັກສູດນີ້ຈະດໍາເນີນໄປໂດຍມີການບັນຍາຍພາກທິດສະດີ, ສົມທຽບຕົວຈິງກັບສະພາບການຄຸ້ມຄອງໂຄງການຢູ່ປະເທດລາວ, ການສົນທະນາແລະຄົ້ນຄວ້າເປັນກຸ່ມ.ນັກສໍາມະນາກອນຈະໄດ້ຮັບຊົມສາລະຄະດີການຄຸ້ມຄອງໂຄງການ Project X ຂອງປະເທດຍີ່ປຸ່ນ 3 ຫົວເລື່ອງ ແລະ ມີສ່ວນຮ່ວມໃນການວິເຄາະການຄຸ້ມຄອງໂຄງການເຫຼົ່ານັ້ນ.

**ງ. ປະສົບການຂອງອາຈານສອນ**

ດຣ. ພັນປະກິດ ອ່ອນພັນດາລາ ເປັນນັກຄົ້ນຄວ້າທີ່ມີປະສົບການສູງທັງພາຍໃນ ແລະ ຕ່າງປະເທດ. ທ່ານຈົບການສຶກສາລະດັບປະລິນຍາເອກໃນປີ 2008 ຈາກປະເທດຍີ່ປຸ່ນ ແລະ ຜ່ານການເຮັດວຽກກ່ຽວກັບໂຄງການພັດທະນາຕ່າງໆມາຫຼາຍກວ່າ 10 ປີ.

## ຫົວຂໍ້ 8: "ການນຳໃຊ້ຊອບແວເຂົ້າໃນການວິໄຈ" (10ມື້ = 30ຊົ່ວໂມງ)
## ວັນທີ 14 - 25 ມີນາ 2016, ເວລາ 17:30 – 20:30

**ກ. ຈຸດປະສົງຂອງຫຼັກສູດ:**

ເພື່ອໃຫ້ສຳມະນາກອນສາມາດກຽມຂໍ້ມູນສຳລັບໃຊ້ກັບໂປແກຣມສຳເລັດຮູບທາງສະຖິຕິ(ໂປຣແກຣມSPSS)ໄດ້, ພ້ອມດຽວກັນນັ້ນກໍ່ເພື່ອໃຫ້ສຳມະນາກອນສາມາດເລືອກໃຊ້ສະຖິຕິທີ່ຖືກຕ້ອງ ແລະ ເໝາະສົມສຳລັບການວິເຄາະຂໍ້ມູນ ໃນງານວິໄຈ, ນອກຈາກນັ້ນຍັງຊ່ວຍໃຫ້ສຳມະນາກອນສາມາດໃຊ້ໂປຣແກຣມສຳເລັດຮູບທາງສະຖິຕິມາຊ່ວຍໃນການວິເຄາະຂໍ້ມູນ, ການແປຜົນທີ່ໄດ້ຈາກໂປຣມແກຣມສຳເລັດຮູບທາງສະຖິຕິ ແລະ ນຳໄປໃຊ້ໃນຮູບແບບຂອງການວິໄຈໃຫ້ເກີດປະໂຫຍດສູງສຸດ.

**ຂ. ເນື້ອໃນໂດຍຫຍໍ້:**

ເທັກນິກທາງສະຖິຕິ, ຫຼັກການເລືອກເທັກນິກສະຖິຕິຕ່າງໆທີ່ຈະນຳມາໃຊ້ໃນການວິເຄາະຂໍ້ມູນສຳລັບງານວິໄຈຕ່າງໆ, ການນຳສະເໜີຂໍ້ມູນຈາກການວິເຄາະ ແລະ ການອະທິບາຍຄວາມໝາຍໃນງານວິໄຈ, ການ Input ຂໍ້ມູນເຂົ້າໃນໂປຣແກຣມSPSS, ການກວດສອບຂໍ້ມູນດ້ວຍໂປຣແກຣມSPSS, ການຊອກຫາຄວາມເຊື່ອໝັ້ນຂອງແບບສອບຖາມ, ການວິເຄາະຂໍ້ມູນໂດຍໃຊ້ສະຖິຕິພັນລະນາດ້ວຍໂປຣແກຣມSPSS, ການທົດສອບສົມມຸດຖານດ້ວຍໂປຣແກຣມ SPSS.

**ຄ. ຮູບແບບຂອງການຝຶກອົບຮົມ:**

- ບັນຍາຍທິດສະດີ, ວິທີປ້ອນຂໍ້ມູນ, ຕົວຢ່າງການນຳໃຊ້ ໂປຣແກຣມ SPSS ດ້ວຍ Power point
- ການປະຕິບັດຕົວຈິງຂອງໂປຣແກຣມ SPSS ຈາກຕົວຢ່າງການວິໄຈ.

**ງ. ປະສົບການຂອງອາຈານສອນ:**

ທ່ານ ດຣ. ລັດສະໝີ ວົງແສງຈັນ ເປັນອາຈານສອນທີ່ມີປະສົບການຫຼາຍປີ ດ້ານສະຖິຕິການວິໄຈ, ບໍລິຫານທຸລະກິດ ແລະ ບໍລິຫານການເງິນ. ເພິ່ນໄດ້ສຳເລັດການສຶກສາ ປະລິນຍາໂທ ສາຂາບໍລິຫານທຸລະກິດ ແລະ ປະລິນຍາເອກ ສາຂາບໍລິຫານການເງິນ ທີ່ນະຄອນຊຽງໄຮ້ ສປ ຈີນ.

**<u>ໝາຍເຫດ</u>:** ຄ່າລົງທະບຽນ 10 ມື້ = 850.000 ກີບ (ແປດແສນຫ້າສິບພັນກີບ)
5 ມື້ = 700.000 ກີບ (ເຈັດແສນກີບ)
2 ມື້ = 400.000 ກີບ (ສີ່ແສນກີບ)

**ລວມຄ່າເອກະສານປະກອບຫລັກສູດ**

**ໄລຍະເວລາ 17:30 – 20:30 (ວັນຈັນ-ສຸກ)**

<u>ຕິດຕໍ່ສອບຖາມລາຍລະອຽດໄດ້ທີ່ ພະແນກຫລັກສູດບໍລິຫານທຸລະກິດ, ສະຖາບັນລາວ-ຍີ່ປຸ່ນ:</u>

ໂທລະສັບ (030) 5210748, ແຟັກ: (021) 725016, 770267
Website: www.lji.edu.la Email: bzcourse@yahoo.com

**<u>ຜູ້ຮັບຜິດຊອບຫລັກສູດ:</u>** ນ. ລັດດາພອນ 030 5841519 **(ໃນໂມງລັດຖະການ)**

ເລກທີ: ............

ຕິດຮູບ 3 x 4

# ໃບສະໝັກເຂົ້າຮຽນຫຼັກສູດບໍລິຫານທຸລະກິດ
ທີ່ ສະຖາບັນລາວ-ຍີ່ປຸ່ນ, ມະຫາວິທະຍາໄລແຫ່ງຊາດ

- ຊື່ ແລະນາມສະກຸນ (ພາສາລາວ)..................................
  (ພາສາອັງກິດ)... [ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ][ ]
- ວັນເດືອນປີເກີດ.............. ບ້ານຢູ່ປະຈຸບັນ.................. ເມືອງ.................. ແຂວງ..................
- ໂທລະສັບ(ບ້ານ)................ ມືຖື.................. ອີເມວ:..................................
- ອາຊີບ.................................. ☐ ກຳລັງຊອກວຽກ
- ບ່ອນປະຈຳການ (ກະຊວງ/ບໍລິສັດ)ຂຽນເປັນພາສາລາວ..................................
- ບ່ອນປະຈຳການ (ກະຊວງ/ບໍລິສັດ)ຂຽນເປັນພາສາອັງກິດ..................................
- ຕຳແໜ່ງ.................................. ອາຍຸການເຮັດວຽກ.............ປີ
- ທີ່ຕັ້ງບ່ອນປະຈຳການ..................................
- ໂທລະສັບ (ຫ້ອງການ).................. ແຟກສ໌.................. ອີເມວ:..................
- ລະດັບການສຶກສາ: ☐ ມັດທະຍົມຕົ້ນ ☐ ມັດທະຍົມປາຍ ☐ ອື່ນໆ (ລະບຸ)..................
- ລະດັບວິຊາສະເພາະ: ☐ ຈົບຂັ້ນກາງ ☐ ຊັ້ນສູງ ☐ ປະລິນຍາຕີ ☐ ອື່ນໆ(ລະບຸ)..................
- ວິຊາສະເພາະ..................................
- ພາສາຕ່າງປະເທດ: ☐ ອັງກິດ ☐ ດີ ☐ ປານກາງ ☐ ພໍໃຊ້ ☐ ພາສາອື່ນໆ..................
- **ຫລັກສູດທີ່ສະໝັກຮຽນ,ກະລຸນາ ☑ ເລືອກໝາຍຫລັກສູດດັ່ງລຸ່ມນີ້:**

| | <u>ໄລຍະຮຽນ</u> |
|---|---|
| ☐ ພັດທະນາຄວາມຄິດຂອງຕົນສູ່ຄວາມສຳເລັດ | ☐ 19 - 30/10/2015 |
| ☐ ຍຸດທະສາດການບໍລິຫານ | ☐ 16 - 27/11/2015 |
| ☐ ການບັນຊີການເງິນຂັ້ນຕົ້ນ | ☐ 30/11 - 11/12/2015 |
| ☐ ການບໍລິຫານບຸກຄະລາກອນ | ☐ 14 - 25/12/2015 |
| ☐ ການສ້າງແຜນທຸລະກິດ | ☐ 18 - 29/01/2016 |
| ☐ ການຕະຫລາດສຳລັບການບໍລິການ | ☐ 01 - 12/02/2016 |
| ☐ ການຄຸ້ມຄອງໂຄງການ | ☐ 15 - 26/02/2016 |
| ☐ ການນຳໃຊ້ຊອບແວເຂົ້າໃນການວິໄຈ | ☐ 14 - 25/03/2016 |

- ຜ່ານມາທ່ານເຄີຍເຂົ້າຮ່ວມການຝຶກອົບຮົມທີ່ສະຖາບັນລາວ-ຍີ່ປຸ່ນບໍ່?: ☐ ບໍ່ເຄີຍ ☐ ເຄີຍ ຈັກຄັ້ງ:..............
- ທ່ານຮູ້ຈັກຫຼັກສູດພວກເຮົາຈາກໃສ: ☐ ພ/ງຂອງສະຖາບັນ; ☐ ໜັງສືພິມ; ☐ ອີເມວ; ☐ ເວບໄຊສ໌; ☐ ໂທ/ແຟັກ; ☐ ໝູ່ເພື່ອນ; ☐ ອື່ນໆ..........
- ອົງການທີ່ໃຫ້ເງິນອຸດໜຸນການມາຮຽນ: ☐ ບໍລິສັດ/ກະຊວງ.................................. ☐ ກຸ້ມຕົນເອງ

ນະຄອນຫຼວງວຽງຈັນ,ວັນທີ..........................

<u>ລາຍເຊັນຜູ້ສະໝັກ</u>

<u>ຄຳເຫັນ ແລະ ລາຍເຊັນ</u>
<u>ອົງການຈັດຕັ້ງທີ່ສັງກັດ</u>

ຕູ້ ປ.ນ 7322, ໂທ: 030- 5210748, 720156, ແຟັກ: 021-725016, 770267, Email: bzcourse@yahoo.com ເວບໄຊສ໌: www.lji.edu.la